# ການລົງທຶນຂອງອົດສະຕຣາລີໃນການພັດທະນາຄູ ຢູ່ ສປປ ລາວ

## ຈຸດເດັ່ນໃນການມີສ່ວນຮ່ວມຂອງນັກຮຽນ

ລັດຖະບານອົດສະຕຣາລີ ສະໜັບສະໜູນລັດຖະບານ ສປປ ລາວ ໃນການດຳເນີນການປະຕິຮູບການສຶກສາຊັ້ນປະຖົມ ໂດຍຜ່ານ ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນສຳລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ (ແຜນງານບີຄວາ), ລວມທັງການນຳໃຊ້ຫຼັກສູດປະຖົມສະບັບປັບປຸງໃໝ່. ໄລຍະທີ 1 ຂອງແຜນງານບີຄວາ (2015-22) ໄດ້ສະໜັບສະໜູນ ກະຊວງສຶກສາທິການ ແລະ ກິລາ (ສສກ) ໃນການຜັນຂະຫຍາຍຫຼັກສູດປະຖົມສະບັບປັບປຸງໃໝ່ໃນໂຮງຮຽນ. ການຊ່ວຍເຫຼືອຂອງແຜນງານບີຄວາລວມມີ ສື່ການຮຽນການສອນ, ການປະຖົມນິເທດກ່ຽວກັບຫຼັກສູດໃໝ່, ແລະ ທຶນສະໜັບສະໜູນວຽກງານສຶກສາ. ໄລຍະທີ 2 (2022-26) ແມ່ນໄດ້ສຸມໃສ່ການສອນແບບຮຽນຮ່ວມ, ການມີສ່ວນຮ່ວມຂອງນັກຮຽນ ແລະ ການປັບປຸງຜົນການຮຽນ.

ເພື່ອໃຫ້ເຂົ້າໃຈເຖິງຄວາມຄືບໜ້າ ແລະ ການປັບປຸງທີ່ຈຳເປັນ, ລັດຖະບານອົດສະຕຣາລີ ໄດ້ຈັດຕັ້ງການປະເມີນທີ່ເປັນເອກະລາດ. ໂດຍການນຳພາຂອງສະພາການຄົ້ນຄວ້າການສຶກສາຂອງອົດສະຕຣາລີ, ການສຶກສາຄົ້ນຄວ້າໄລຍະຍາວ ໄດ້ສຶກສາຄົ້ນຄວ້າເຖິງວິທີການທີ່ ແຜນງານບີຄວາໄດ້ສະໜັບສະໜູນການປັບປຸງຄຸນນະພາບການສອນ ແລະ ການຮຽນຮູ້ຂອງນັກຮຽນ. ໃນເອກະສານນີ້, ພວກເຮົາຈະເບິ່ງລົງເລິກຜົນຈາກການສຶກສາຄົ້ນຄວ້າ ກ່ຽວກັບການມີສ່ວນຮ່ວມຂອງນັກຮຽນ.

### ການຄົ້ນພົບທີ່ສຳຄັນ

ການສຶກສາຄົ້ນຄວ້າໄລຍະຍາວ ໄດ້ພົບວ່າມີການປ່ຽນແປງໃນທາງທີ່ດີດ້ານທັດສະນະຄະຕິ ຂອງນັກຮຽນ ຕໍ່ກັບການຮຽນພາສາລາວ ດ້ວຍການນຳໃຊ້ຫຼັກສູດປະຖົມສະບັບປັບປຸງໃໝ່ໃນ ສປປ ລາວ. ຜູ້ເຂົ້າຮ່ວມໃນການສຶກສາຄົ້ນຄວ້ານີ້ໄດ້ລາຍງານວ່າ ລະດັບການມີສ່ວນຮ່ວມ, ຄວາມສົນໃຈ, ການພົວພັນ, ແລະ ຄວາມເປັນຢູ່ທີ່ດີຂອງນັກຮຽນເພີ່ມຂຶ້ນ ເຊິ່ງເປັນຜົນມາຈາກການທີ່ຄູຈັດຕັ້ງປະຕິບັດຫຼັກສູດໃໝ່.

**"ຂ້ອຍໄດ້ສັງເກດເຫັນວ່າ ນັກຮຽນມີຄວາມສົນໃຈ ແລະ ເອົາໃຈໃສ່ຫຼາຍກວ່າແຕ່ກ່ອນ." - ຜູ້ໃຫ້ສຳພາດຢູ່ຂັ້ນສູນກາງ**

ຂໍ້ມູນກ່ຽວກັບທັດສະນະຄະຕິ ແລະ ທ່າທີຕໍ່ການຮຽນຂອງນັກຮຽນນີ້ ແມ່ນໄດ້ຜ່ານການເກັບກຳຂໍ້ມູນ 3 ຮອບ, ໂດຍຜ່ານການເຮັດແບບສອບຖາມ, ການສຳພາດຜູ້ທີ່ເປັນກໍລະນີສຶກສາ ແລະ ການສັງເກດການສອນໃນຫ້ອງຮຽນວິຊາພາສາລາວ ແຕ່ປີ 2019-2022.

ການພົວພັນ ແລະ ການມີສ່ວນຮ່ວມຂອງນັກຮຽນທີ່ດີຂຶ້ນ ແມ່ນມີຄວາມສຳຄັນຕໍ່ການສອນ ແລະ ການຮຽນຮູ້. ການຮຽນຮູ້ຂອງນັກຮຽນ ແມ່ນກວ້າງກວ່າຜົນສຳເລັດທາງດ້ານການຮຽນ. ການມີສ່ວນຮ່ວມຕ່າງໆ, ເຊິ່ງລວມມີ ການມີສ່ວນຮ່ວມໃນກິດຈະກຳ, ການຮ່ວມມືກັບໝູ່ຄູ່ ແລະ ການຊອກຫາສິ່ງທ້າທາຍ, ລ້ວນແລ້ວແຕ່ມີ ຄວາມກ່ຽວຂ້ອງກັບຜົນໄດ້ຮັບໃນທາງບວກຂອງນັກຮຽນຢ່າງສອດຄ່ອງກັນ, ລວມທັງຜົນສຳເລັດດ້ານອື່ນໆ, ຜົນສຳເລັດດ້ານການຮຽນ ແລະ ຄວາມເປັນຢູ່ທີ່ດີຂອງເຂົາເຈົ້າ.



© ໃສ່ຮູບພາບ

**ການປ່ຽນແປງດ້ານທັດສະນະຄະຕິຂອງນັກຮຽນ ຕໍ່ກັບ ການຮຽນຮູ້ໄປໃນທາງທີ່ດີ ໄດ້ສະແດງໃຫ້ເຫັນວ່າ ຫຼັກສູດປະຖົມສະບັບປັບປຸງໃໝ່ສ້າງການປ່ຽນແປງທີ່ດີຂຶ້ນຢ່າງແທ້ຈິງ. ໃນຂັ້ນຕໍ່ໄປ, ສິ່ງສຳຄັນແມ່ນຄູ ແລະ ນັກຮຽນຕ້ອງໄດ້ຮັບການສະໜັບສະໜູນ ເພື່ອຫັນປ່ຽນຜົນໄດ້ຮັບໃນເບື້ອງຕົ້ນເຫຼົ່ານີ້ ໄປສູ່ການຮຽນຮູ້ທີ່ດີຂຶ້ນ.**

ຜູ້ເຂົ້າຮ່ວມກໍລະນີສຶກສາ ໄດ້ເຊື່ອມໂຍງ ບັນດາຄວາມມ່ວນຊື່ນຂອງນັກຮຽນກັບປຶດຮຽນ ແລະ ຫຼັກສູດປະຖົມສະບັບປັບປຸງໃໝ່ຂ້າງລຸ່ມນີ້:

- ມີສະພາບແວດລ້ອມການຮຽນຮູ້ທີ່ມ່ວນຊື່ນ ແລະ ໜ້າສົນໃຈກວ່າ
- ມີກິດຈະກໍາທີ່ຫຼາກຫຼາຍນັກຮຽນມັກຫຼາຍຂຶ້ນ
- ມີສື່ການຮຽນການສອນທີ່ຫຼາກຫຼາຍກວ່າເກົ່າ

**"ມັນ (ຫຼັກສູດໃໝ່) ໄດ້ເຮັດໃຫ້ນັກຮຽນຕື່ນເຕັ້ນກັບການຮຽນຫຼາຍຂຶ້ນ, ທັງມີຄວາມກະຕືລືລົ້ນຫຼາຍຂຶ້ນ."**
**- ຜູ້ໃຫ້ສໍາພາດຢູ່ຂັ້ນສູນກາງ**

ຜູ້ເຂົ້າຮ່ວມກໍລະນີສຶກສາ ໄດ້ເຊື່ອມໂຍງ ການປັບປຸງລະດັບການມີສ່ວນຮ່ວມ, ຄວາມສົນໃຈ, ການພົວພັນ, ແລະ ຄວາມເປັນຢູ່ທີ່ດີຂອງນັກຮຽນທີ່ເພີ່ມຂຶ້ນ ເພື່ອ:

- ການຮຽນການສອນທີ່ເອົານັກຮຽນເປັນໃຈກາງ ແລະ ທີ່ເນັ້ນໃສ່ການປະຕິບັດຕົວຈິງ
- ສາຍພົວພັນຂອງມໍລະດົກທາງວັດທະນະທໍາ, ສະພາບການໃນທ້ອງຖິ່ນ ແລະ ສິ່ງແວດລ້ອມ
- ກິດຈະກໍາທີ່ເອື້ອອໍານວຍໃຫ້ແກ່ການມີສ່ວນຮ່ວມ ແລະ ການພົວພັນຂອງນັກຮຽນ

**"ຫ້ອງຮຽນທີ່ມີນັກຮຽນຖາມຄໍາຖາມຢ່າງຫ້າວຫັນ ແທນທີ່ຈະມີແຕ່ການຈົດກ່າຍເອົາບົດຮຽນຈາກກະດານ. ມີການປັບປຸງໃນວິທີການຮຽນທີ່ມີແຕ່ຄູເປັນຜູ້ສົ່ງຄວາມຮູ້ຢ່າງດຽວ"**
**- ຜູ້ໃຫ້ສໍາພາດຢູ່ຂັ້ນສູນກາງ**

ຂໍ້ມູນທີ່ມີໄດ້ຊີ້ໃຫ້ເຫັນວ່າ ຄວາມຮັບຮູ້ກ່ຽວກັບການສຶກສາແບບຮຽນຮ່ວມ ແລະ ຍຸດທະສາດທີ່ກ່ຽວຂ້ອງ ໄດ້ປະກອບສ່ວນເຂົ້າໃນ ການເພີ່ມຂຶ້ນຂອງການມີສ່ວນຮ່ວມຂອງນັກຮຽນ ແລະ ຄວາມເປັນຢູ່ທີ່ດີຂຶ້ນຂອງນັກຮຽນຍິງ ແລະ ຊາຍ, ນັກຮຽນທີ່ມີຜົນການຮຽນຕໍ່າ ແລະ ຜູ້ທີ່ບໍ່ເວົ້າພາສາລາວເປັນພາສາແມ່.

**"ເມື່ອຄູສອນຄຸ້ນເຄີຍກັບວິທີການເຫຼົ່ານີ້ຫຼາຍຂຶ້ນ, ມັນຈະເປັນປະໂຫຍດກັບເດັກທຸກຄົນ. ບໍ່ພຽງແຕ່ຜູ້ທີ່ບໍ່ເວົ້າພາສາລາວເປັນພາສາແມ່ເທົ່ານັ້ນ, ແຕ່ລວມໄປເຖິງຜູ້ທີ່ມີຄວາມພິການນໍາອີກ."**
**- ຜູ້ໃຫ້ສໍາພາດຢູ່ຂັ້ນສູນກາງ**

## ຜົນໄດ້ຮັບນີ້ໝາຍຄວາມວ່າແນວໃດ?

ເຖິງແມ່ນວ່າອັດຕາການຂາດໂຮງຮຽນ ແລະ ການອອກໂຮງຮຽນແມ່ນຍັງສູງ ພ້ອມທັງມີຄວາມຕ້ອງການໃນການປັບປຸງຜົນການຮຽນໃນ ສປປ ລາວ, ພວກເຮົາຍັງເຫັນວ່າ ການມີສ່ວນຮ່ວມຂອງນັກຮຽນແມ່ນມີທ່າອ່ຽງທີ່ດີຂຶ້ນ. ຂໍ້ມູນຈາກການສຶກສາຄົ້ນຄວ້າໄດ້ສະແດງໃຫ້ເຫັນວ່າ ຫຼັກສູດໃໝ່ນີ້ໄດ້ຊ່ວຍໃຫ້ນັກຮຽນມີຄວາມມ່ວນຊື່ນກັບການຮຽນພາສາລາວຫຼາຍຂຶ້ນ ແລະ ມີສ່ວນຮ່ວມກັບກິດຈະກໍາໃນໂຮງຮຽນຫຼາຍຂຶ້ນ. ຂັ້ນຕອນຕໍ່ໄປ ແມ່ນການນໍາໃຊ້ຄວາມສໍາເລັດເຫຼົ່ານີ້ ເພື່ອສະໜັບສະໜູນໃຫ້ແກ່ການເສີມສ້າງຄວາມກ້າວໜ້າຂອງຜົນການຮຽນຮູ້ຂອງນັກຮຽນ.

ອົງປະກອບທີ່ສໍາຄັນ ແມ່ນການສະໜັບສະໜູນຄູສໍາລັບການຮຽນຮູ້ຂອງພວກເຂົາເອງ, ເຊິ່ງມັນປະກອບມີ ການນໍາໃຊ້ຫຼັກຖານເພື່ອຕັ້ງເປົ້າໝາຍການສອນຂອງເຂົາເຈົ້າໃຫ້ຕອບສະໜອງຕໍ່ຄວາມຕ້ອງການຂອງນັກຮຽນ. ຄູຕ້ອງມີຄວາມຮູ້, ຄວາມສາມາດ ແລະ ເຄື່ອງມືທີ່ດີ ເພື່ອໃຫ້ສາມາດປະຕິບັດການສອນໄດ້ດີ. ແນວທາງໃນການພັດທະນາວິຊາຊີບຄູຢ່າງຕໍ່ເນື່ອງຂອງ ສສກ ແມ່ນສຸມສື່ການຮຽນການສອນເຂົ້າໃນການຝຶກອົບຮົມຄູ ແລະ ການປະຕິບັດການສອນໃນຫ້ອງຮຽນແບບຮຽນຮ່ວມ. ການປັບປຸງການມີສ່ວນຮ່ວມ ແລະ ການຮຽນຮູ້ຂອງນັກຮຽນໄດ້ຮຽກຮ້ອງໃຫ້ມີ ແນວທາງທີ່ມີການຮ່ວມມື ແລະ ມີເປົ້າໝາຍຈະແຈ້ງ ໃນລະບົບການສຶກສາ, ໂຮງຮຽນ, ຜູ້ປົກຄອງ ແລະ ຊຸມຊົນ. ແຜນງານບີຄວາໄດ້ເປັນສ່ວນໜຶ່ງຂອງວຽກງານເຫຼົ່ານີ້, ໂດຍຮ່ວມກັນກັບຫຼາກຫຼາຍແຜນງານ ແລະ ບັນດາຄູ່ຮ່ວມພັດທະນາ ທີ່ນໍາພາໂດຍ ສສກ ແລະ ລັດຖະບານແຫ່ງ ສປປ ລາວ.

ເຂົ້າເບິ່ງເວັບໄຊທ໌ຂອງ DFAT ເພື່ອອ່ານບົດລາຍງານສະບັບເຕັມ: ການປະເມີນການລົງທຶນຂອງອົດສະຕຣາລີໃນການພັດທະນາຄູໃນ ສປປ ລາວ. ບົດລາຍງານສະບັບນີ້ ໄດ້ສະແດງໃຫ້ເຫັນເຖິງພາກສ່ວນໜຶ່ງຂອງຊຸດການສຶກສາ ທີ່ມອບໃຫ້ໂດຍກະຊວງການຕ່າງປະເທດ ແລະ ການຄ້າອົດສະຕຣາລີ (DFAT), ເພື່ອສຶກສາແຜນງານກ່ຽວກັບວຽກງານການພັດທະນາການຮຽນການສອນຢູ່ໃນ 3 ປະເທດຄື: ສປປ ລາວ, ຕີມໍເລັສເຕ ແລະ ວານູອາຕູ.

Australian Government
Department of Foreign Affairs and Trade

ACER

Education Analytics Service is supported by the Australian Government and implemented by the Australian Council for Educational Research.